# ຄວາມສະເທືອນໃຈ



6


ບຸ໋ມ!!!
“ຮາ ໆ ໆ! ເຈົ້າເຮັດຫຍັງ?”
“ກໍາລັງຄິດກ່ຽວກັບຄວາມ ຮູ້ສຶກຂອງຂ້ອຍເອງ.”
“ຄວາມຮູ້ສຶກ ຫຍັງຫວະ?”
“ຮູ້ບໍ? ໃຈຂອງເຮົາ ກໍຄືກັບ ໝາກປຸມເປົ້ານີ້.”
“ຂ້ອຍຈະອະທິບາຍໃຫ້ຟັງ.”
M.CH.SOKHA


ເມື່ອຕອນ ຫຼ້ານອ້ຍ ຍັງເປັນເດັກນ້ອຍ ລາວຢູ່ນຳແມ່ເຖົ້າ. ຫຼ້ານ້ອຍ ກັບແມ່ເຖົ້າ ມີ
ຄວາມຜູກພັນກັນຫຼາຍ ເຖິງແມ່ນວ່າ ຈະເຮັດຫຍັງ, ຢູ່ໃສ ຫື ໄປໃສ ກໍໄປນຳກັນຕະຫຼອດເຊັ່ນ:
ເລົ່າເລື່ອງໃຫ້ກັນຟັງຕະຫຼອດ
ແຕ່ງກິນນຳກັນ
ແມ່ເຖົ້າ ຈະເປຍຜົມ
ໃຫ້ ຫຼ້ານອ້ຍ.
M.CH. SOKHA


ແຕ່ແມ່ເຖົ້າຂອງຫຼ້ານອ້ຍ ເຖົ້າແກ່ຫຼາຍແລ້ວ
ລາວມັກເຈັບປ່ວຍເລື້ອຍໆ.
ມີມື້ໜຶ່ງ ກ່ອນທີ່ ຫຼ້ານ້ອຍ ຈະອອກຈາກບ້ານໄປໂຮງຮຽນ
ແມ່ເຖົ້າຂອງລາວເຈັບຫຼາຍ ແລະຮູ້ສຶກອ່ອນເພຍຫຼາຍ.
ເມື່ອ ຫຼ້ານ້ອຍ ກັບມາຮອດເຮືອນ ລາວໄດ້
ເຫັນແມ່ເຖົ້າຂອງລາວນອນຕາຍຢູ່.


ຫຼ້ານ້ອຍ ຮູ້ສຶກເສຍໃຈຢ່າງແຮງ
ແລະລາວໄຫ້ຈົນນ້ຳຕາບໍ່ຂາດສາຍ.
“ຢ່າໄຫ້ເດີ!
ແມ່ເຖົ້າ ໄປສະບາຍແລ້ວ.”
ຫຼ້ານ້ອຍ ຮຽນບໍ່ໄດ້. ນາງມີແຕ່ຄິດຮອດແມ່ເຖົ້າຂອງລາວ.
M. CH. SOKHA


“ຫຼ້ານ້ອຍ ເຈົ້າເປັນຫຍັງ?”
“ບໍ່ມີຫຍັງ.”
“ຍ້ອນຫຍັງ ໜ້າຂອງເຈົ້າຈຶ່ງໂສກ ເສົ້າທຸກມື້?”
“ໂອ້! ແມ່ເຖົ້າສຸດທີ່ຮັກຂອງຂ້ອຍ ໄດ້ຕາຍຈາກຂ້ອຍໄປແລ້ວ.”
“ຖ້າເຈົ້າໄຫ້ ຄົງຈະຊ່ວຍໃຫ້ເຈົ້າລະບາຍອາລົມໄດ້.”
“ມີຜູ້ໜຶ່ງບອກໃຫ້ ຫຼ້ານ້ອຍ ເຊົາໄຫ້ແຕ່ອີກຜູ້ໜຶ່ງ ເວົ້າວ່າໄຫ້ເລີຍ!?”
“ຂ້ອຍຄິດວ່າ ການໄຫ້ອອກມາ ໜ້າຈະຊ່ວຍໃຫ້ດີຂຶ້ນ.”
M. CH. SOKHA


"ຫຼ້ານ້ອຍ ເຈົ້າຢ່າຊັງຄວາມຮູ້ສຶກໄວ້ໃນໃຈ!
ມີບາງສິ່ງບາງຢ່າງ ທີ່ຊ່ວຍເຈົ້າໄດ້ເຊັ່ນ:
ການແຕ້ມຮູບ
ການສົນທະນາ
ປຶກສາກັນ
ການອ້ອນວອນ
ການຮ້ອງໄຫ້
ແຕ່ກໍມີສິ່ງອື່ນອີກ
ທີ່ຈະບໍ່ຊ່ວຍໃຫ້ເຈົ້າລະບາຍ
ອາລົມໄດ້ເຊັ່ນ:
ກິນເຫຼົ້າ
ການເຮັດ
ໃຫ້ໂຕເອງໂນໂຫ
ກິນຢາເສບຕິດ
ການຫຼິ້ນ
ການພະນັນ
"ໂອ້! ຂອບໃຈຫຼາຍໆທີ່ເຈົ້າ
ໃຫ້ກຳລັງໃຈຂ້ອຍ."
ແລ້ວທັງສອງກໍພາກັນ
ຍ່າງເຂົ້າຫ້ອງຮຽນ.
ໃນຕອນແລງມື້ນັ້ນ ຫຼ້ານ້ອຍ ໄດ້
ລະບາຍຄວາມຮູ້ສຶກຂອງລາວອອກ
ມາ ລາວຄິດຮອດແມ່ເຖົ້າຫຼາຍ!


“ນີ້ເດ! ເອົາໝາກປຸມເປົ້າ”
ໝາກປຸມເປົ້ານີ້ ຄືກັບໃຈທີ່ເຕັມ ໄປດ້ວຍຄວາມຮູ້ສຶກ.
ຖ້າເຮົາບໍ່ປ່ອຍລົມມັນອອກໄປ...
ບູ໋ມ!
“ປຸມເປົ້າກໍຈະແຕກ!”
“ຖ້າເຮົາບໍ່ຮູ້ທີ່ຈະລະບາຍ ຄວາມຮູ້ສຶກຂອງເຮົາ ໃນທາງທີ່ດີ ແລະມີປະໂຫຍດ ມັນກໍຈະເຮັດໃຫ້ເຮົາ ເຈັບຫຼາຍກວ່າເກົ່າ.”


ຄຳຖາມສົນທະນາ
ເຈົ້າເຄີຍຂັງຄວາມຮູ້ສຶກຂອງເຈົ້າ
ກ່ຽວກັບເລື່ອງໃດເລື່ອງໜຶ່ງ ແລະ
ບໍ່ເຄີຍລະບາຍໃຫ້ໃຜຟັງເລີຍບໍ?


ກິດຈະກຳ
ໃຫ້ເຈົ້າລອງໃຊ້ປຸມເປົ້າໜ່ວຍໜຶ່ງມາເປົ່າ
ແລະໃຫ້ເຈົ້າຄິດກ່ຽວກັບຄວາມຮູ້ສຶກ
ທີ່ເຈົ້າບໍ່ເຄີຍລະບາຍອອກມາ
ແລ້ວໃຫ້ເຈົ້າເປົ່າແຮງໆເບິ່ງ.

ແລ້ວຂ້ານ້ອຍກໍໄດ້ເຫັນສະຫວັນແລະແຜ່ນດິນໂລກໃໝ່. ສະຫັວນເດີມ ແລະແຜ່ນດິນໂລກເດີມ ໄດ້ສູນຫາຍໄປ ແລະທະເລກໍບໍ່ມີຄືກັນ. ຂ້ານ້ອຍ ໄດ້ຍິນສຽງດັງ ອອກມາຈາກບັນລັງ ຊຶ່ງກ່າວວ່າ:

“ບັດນີ້ບ້ານຂອງ ພຣະເຈົ້າ ຢູ່ກັບມະນຸດ! ພຣະອົງ ຈະມີຊີວິດຢູ່ກັບພວກເຂົາ ແລະພວກເຂົາກໍຈະໄດ້ເປັນປະຊາຊົນຂອງ ພຣະອົງ.

ພຣະເຈົ້າ ເອງຈະຢູ່ກັບພວກເຂົາ ແລະ ພຣະອົງກໍຈະເປັນ ພຣະເຈົ້າ ຂອງພວກເຂົາ. ພຣະອົງ ຈະເຊັດນ້ຳຕາທຸກຢົດຈາກຕາຂອງພວກເຂົາ. ຄວາມຕາຍຈະບໍ່ມີອີກຕໍ່ໄປ, ຄວາມໂສກເສົ້າ, ການຮ້ອງໄຫ້ ແລະ ຄວາມເຈັບປວດ ຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ໃນຄາວກ່ອນນັ້ນ ກໍໄດ້ສູນຫາຍໄປແລ້ວ.”

ພຣະນິມິດ 21:1-4





© Alongsiders International
www.alongsiders.org
Email: info@alongsiders.org